

# ທ່ານໄດ້ຮັບການຄຸມຄອງ ໂດຍ Medicaid ບໍ່?

## ສິ່ງທີ່ທ່ານຕ້ອງຮູ້ກ່ຽວກັບການຕໍ່ອາຍຸການຄຸ້ມຄອງສຸຂະພາບຂອງທ່ານ.

ທຸກໆປີ, ລັດຈະກວດສອບຂໍ້ມູນຂອງສະມາຊິກ Medicaid ເພື່ອໃຫ້ແນ່ໃຈວ່າເຂົາເຈົ້າຍັງໄດ້ຮັບສິດ. ຖ້າວ່າພວກເຮົາມີຂໍ້ມູນພຽງພໍ, ພວກເຮົາຈະສົ່ງການແຈ້ງເຕືອນເຖິງທ່ານ (ປະກາດການຕັດສິນໃຈທາງດ້ານສິດທິຜົນປະໂຫຍດ) ເພື່ອແຈ້ງໃຫ້ທ່ານຊາບວ່າພວກເຮົາໄດ້ຕໍ່ອາຍຸ Medicaid ຂອງທ່ານແລ້ວ.

ຖ້າວ່າພວກເຮົາຕ້ອງການຂໍ້ມູນເພີ່ມຕື່ມ, **ພວກເຮົາຈະສົ່ງການແຈ້ງສອງສະບັບ:**

1. ສີເຫຼືອງແມ່ນການແຈ້ງ ຕໍ່ອາຍຸ Medicaid
2. ສີຂາວແມ່ນການຂາວສຳລັບເອກະສານເພີ່ມຕື່ມ.

ການແຈ້ງສອງສະບັບນີ້ຈະມາເຖິງໄປສະນີເທື່ອລະສະບັບ. ໃຫ້ແນ່ໃຈວ່າທ່ານໄດ້ກວດເບິ່ງທັງສອງສະບັບ.

## 3 ປະການ ທີ່ທ່ານສາມາດເຮັດໄດ້ເພື່ອກຽມຄວາມພ້ອມແລະຮັບການຄຸ້ມຄອງ.

1. **ອັບເດດຂໍ້ມູນບັນຊີຂອງທ່ານເປັນປະຈຳ** ເພື່ອໃຫ້ລັດສາມາດເຂົ້າເຖິງຂໍ້ມູນຳຄັນຂອງທ່ານໄດ້

   ຕົວຢ່າງ, ທ່ານຄວນອັບເດດບັນຊີຂອງທ່ານຖ້າວ່າຂໍ້ມູນການຕິດຕໍ່ຂອງທ່ານມີການປ່ຽນແປງ, ທ່ານໄດ້ເຮັດວຽກໃໝ່, ຫຼື ທ່ານເກີດລູກ.
2. **ຕິດຕາມເບິ່ງຈົດໝາຍຈາກລັດ Rhode Island.** ຖ້າວ່າໂຄງການ Medicaid ຕ້ອງການຂໍ້ມູນເພີ່ມຕື່ມເພື່ອ

   ຕໍ່ອາຍຸການຄຸ້ມຄອງຂອງທ່ານ, ທ່ານຈະໄດ້ຮັບແຈ້ງເປັນສີເຫຼືອງ. ທ່ານຍັງຈະໄດ້ຮັບແຈ້ງສີຂາວສຳລັບການຂໍເອກະສານເພີ່ມຕື່ມ. ຖ້າບໍ່ດັ່ງນັ້ນ, ທ່ານ
   ຈະ ໄດ້ຮັບແຈ້ງວ່າການຄຸ້ມຄອງຂອງທ່ານຳເນີນຕໍ່ໄປໂດຍອັດຕະໂນມັດ.
3. **ຈົ່ງດຳເນີນການໂດຍທັນທີ.** ຖ້າວ່າທ່ານໄດ້ຮັບແຈ້ງເປັນສີເຫຼືອງ, ໝາຍຄວາມວ່າລັດຕ້ອງການຂໍ້ມູນເພີ່ມຕື່ມກ່ຽວກັບທ່ານ ຫຼືຄົນຢູ່ໃນຄອບຄົວຂອງທ່ານເພື່ອຕໍ່ອາຍຸການຄຸ້ມຄອງຂອງທ່ານ ກະລຸນາສົ່ງຂໍ້ມູນທີ່ຮ້ອງຂໍທັງໝົດພາຍໃນກຳນົດເວລາໃນເກະສານທີ່ແຈ້ງການຫາທ່ານ.

## ມີຄຳຖາມບໍ່?

**ມີການໃຫ້ຄວາມຊ່ວຍເຫຼືອ. ໂທ:**

- ແຫຼ່ງສຸຂະພາບ RI 1.855.840.4774
- ຝ່າຍບໍລິຫານບຸກຄະລາກອນຂອງ RI 1.855.697.4347

**ຫຼືຈັດການບັນຊີຂອງທ່ານທາງອອນລາຍ:**

- HealthyRhode.RI.gov
- HealthyRhode ແອັບ ເທິງມືຖື

GET IT ON Google Play | Download on the App Store

## ຮຽນຮູ້ເພີ່ມຕື່ມ.

ຖ້າວ່າຕ້ອງການຮຽນຮູ້ເພີ່ມຕື່ມກ່ຽວກັບການຕໍ່ອາຍຸ ຫຼືຄົ້ນຫາເວລາຕໍ່ອາຍຸMedicaid ຂອງທ່ານຈະມີຂຶ້ນໂດຍການ, ເຂົ້າໄປທີ່ **staycovered.ri.gov** ຫຼືສະແກນລະຫັດ QR.

ສະແກນລະຫັດ QR ເພື່ອຄົ້ນຫາວັນຕໍ່ອາຍຸMedicaid ຂອງທ່ານ.

EXECUTIVE OFFICE OF HEALTH & HUMAN SERVICES STATE OF RHODE ISLAND

RHODE ISLAND DEPARTMENT OF HUMAN SERVICES

HealthSourceRI WE WORK FOR YOU

ກຽມຄວາມພ້ອມ. ພາຍໃຕ້ການຄຸ້ມຄອງ.